ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 18 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 11 MAY 2015

ສຳນັກງານ ຄຄຊ
ເລກທີ 493
ວັນທີ 13 MAY 2015
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈຳອາທິດ
ທີ 27/04/2015 ຫາ 30/04/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 22/04/2015 | ອາທິດນີ້ 28/04/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ (–) |
|---|---|---|---|
| ເອີໂຣ/ ໂດລາ | 1,0705 | 1,0887 | -1,67% |
| ໂດລາ/ເຢນ | 119,47 | 119,04 | 0,36% |
| ໂດລາ/ບາດ | 32,40 | 32,62 | -0,66% |
| ໂດລາ/ເປໂຊ | 44,26 | 44,24 | 0,04% |
| ໂດລາ/ຣູເປັຍ | 12.948,22 | 12.980,33 | -0,25% |
| ໂດລາ/ໂດລາສິງກະໂປ | 1,3509 | 1,3275 | 1,76% |
| ໂດລາ/ຢວນ | 6,2007 | 6,2074 | -0,11% |

1.2 <u>ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ</u>

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 0,43% ຈາກ 56,18 ໂດລາ/ບາເຣວ ມາເປັນ 56,42 ໂດລາ/ບາເຣວ ແລະ ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 0,43% ຈາກ 1.195,42 ໂດລາ/ອອນ ມາເປັນ 1.200,60 ໂດລາ/ອອນ.

2. <u>ສະພາບເສດຖະກິດເງິນຕາພາຍໃນ</u>

2.1 <u>ສະພາບອັດຕາແລກປ່ຽນພາຍໃນ</u>

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,18% ສຳລັບອັດຕາ ທຫກ ແຕ່ອ່ອນຄ່າລົງ 0,37% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດ ແຂງຄ່າຂຶ້ນ 0,54% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,42% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,27% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 0,42% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,41% ສຳລັບອັດຕາ ທຫກ ແຕ່ແຂງຄ່າຂຶ້ນ 0,15% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 22/04/2015 | | | ອາທິດນີ້ 28/04/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| <u>ອັດຕາທະຄານ</u>[1] | | | | | | | | | |
| ໂດລາ | 8.096,21 | 8.124,93 | 8.114,54 | 8.083,55 | 8.115,00 | 8.099,69 | 0,16% | 0,12% | 0,18% |
| ບາດ | 252,03 | 253,29 | 252,68 | 250,65 | 251,82 | 251,32 | 0,55% | 0,58% | 0,54% |
| <u>ອັດຕາຕະຫຼາດ</u> | | | | | | | | | |
| ໂດລາ | 8.101,75 | 8.128,27 | 8.115,01 | 8.090,83 | 8.199,00 | 8.144,92 | 0,13% | -0,86% | -0,37% |
| ບາດ | 251,61 | 252,97 | 252,29 | 250,65 | 251,79 | 251,22 | 0,38% | 0,47% | 0,42% |
| ຜົດຕ່າງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,07% | 0,04% | 0,01% | 0,09% | 1,04% | 0,56% | | | |
| ບາດ | -0,17% | -0,13% | -0,16% | 0,00% | -0,01% | -0,04% | | | |

2.2 <u>ສະພາບຖານເງິນຕາ ແລະ ປະລິມານເງິນ M2</u>

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 2,16% ທຽບໃສ່ວັນທີ 24/04/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 34,03%,
- ປະລິມານເງິນ M2 ຫຼຸດລົງ 0,22% ເມື່ອທຽບໃສ່ວັນທີ 24/04/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 20,80%.

2.3 <u>ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ</u>

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 27/04/2015) ເຫັນວ່າ ທຫກ ຊື້ໂດລາສຸດທິ 21,07 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 65,45 ລ້ານໂດລາ ແລະ ຂາຍໂດລາໄດ້ 44,38 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 801,56 ລ້ານບາດ (ໃນນີ້ ຊື້ບາດໄດ້ 503,82 ລ້ານບາດ ແລະ ຂາຍບາດໄດ້ 1.305,38 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 565,71% ແລະ ເພີ່ມຂຶ້ນ 356,47% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 12,33 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 434,60 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 19,15 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 74 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈຳນວນ 19,26 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈຳນວນ 1.320,46 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 21/04/2015 | | ອາທິດທີ 27/04/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 3,55 | 92,19 | 19,78 | 348,63 | 457,29% | 278,18% |
| - ທ/ຄທຸລະກິດອື່ນໆ | 8,05 | 28,29 | 45,68 | 155,19 | 467,46% | 448,54% |
| ລວມຊື້: | 11,60 | 120,48 | 65,45 | 503,82 | 464,35% | 318,18% |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 2,31 | 41,03 | 15,82 | 256,19 | 585,10% | 524,38% |
| - ທ/ຄທຸລະກິດອື່ນໆ | 2,59 | 234,83 | 28,56 | 1.049,19 | 100,07% | 346,78% |
| ລວມຂາຍ: | 4,90 | 275,86 | 44,38 | 1.305,38 | 805,60% | 373,20% |
| ຊື້-ຂາຍສຸດທິ ທທກ | 6,70 | -155,38 | 21,07 | -801,56 | 214,65% | 415,86% |
| ຜິດດ່ຽງ ຊື້-ຂາຍ | 57,75 | -128,97 | 32,20 | -159,10 | -255,98% | -301,48% |
| ມູນຄ່າການຊື້-ຂາຍ | 16,50 | 396,34 | 109,83 | 1.809,20 | 565,71% | 356,47% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 5,00 | 0,00 | 208,00 | | |
| - ທຫລ ຂາຍໃຫ້ ທທກ | 0,96 | 0,00 | 19,15 | 282,00 | | |
| ຊື້-ຂາຍສຸດທິ ທຫລ | -0,96 | 5,00 | -19,15 | -74,00 | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 1,00 | 37,28 | 12,33 | 434,60 | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,00 | 237,46 | 60,12 | 1.320,46 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 8,59 | 0,00 | 40,86 | 0,00 | | |
| ຊື້-ຂາຍສຸດທິ ທຫລ | -8,59 | 237,46 | 19,26 | 1.320,46 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 04/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,28% ເພີ່ມຂຶ້ນ 0,09% ຈາກ 1,19% ໃນເດືອນ 03/2015.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 135,97 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 303,8% ທຽບໃສ່ອາທິດຜ່ານມາ.

## 2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 732 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 93,13% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 650,67 ຕື້ກີບ ເພີ່ມຂຶ້ນ 49,71% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) (24-30/04/2015) ມີຈໍານວນ 1.590 ຄັ້ງ ໂດຍມີມູນຄ່າ 321,52 ຕື້ກີບ ຫຼຸດລົງ 40,20% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 448 ຄັ້ງ.

## 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.462,19 ຈຸດ ຫຼຸດລົງ 1,25% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 765.942 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,68 ຕື້ກີບ ເພີ່ມຂຶ້ນ 547,49% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 40,77% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.770 ກີບ/ຮຸ້ນ ຫຼຸດລົງ 92 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 36.803 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 249,16 ລ້ານກີບ ເພີ່ມຂຶ້ນ 29,67% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 29,54% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,62%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.503 ກີບ/ຮຸ້ນ ຫຼຸດລົງ 11 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 720.309 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,40 ຕື້ກີບ ເພີ່ມຂຶ້ນ 734,06% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 37,43% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,29%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍ 8.500 ກີບ/ຮຸ້ນ, ໂດຍໃນອາທິດນີ້ແມ່ນບໍ່ມີການຈັບຄູ່ຊື້-ຂາຍຂອງຮຸ້ນດັ່ງກ່າວ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.777 ກີບ/ຮຸ້ນ ຫຼຸດລົງ 23 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 8.830 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 33,35 ລ້ານກີບ ຫຼຸດລົງ 12,26% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 23,86% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,72%[5].

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສໍາເລັດການຈັດປະຖະກະຖາເລົ່າມູນເຊື້ອວັນສ້າງຕັ້ງພັກປະຊາຊົນປະຕິວັດລາວຄົບຮອບ 60 ປີ;
- ສໍາເລັດການເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມຖອນຖອນບົດຮຽນແຜນງານການພັດທະນາຊົນນະບົດ ແລະ ດໍາລົງຊີວິດລາວ-ອິດສະຕາລີ ທີ່ລາວພຣາຊາ, ❷ ກອງປະຊຸມສໍາມະນາກ່ຽວກັບ ການເພີ່ມຂີດຄວາມສາມາດ ເພື່ອຕິດຕາມ ແລະ ຄວບຄຸມການໄຫຼວຽນຂອງເງິນທຶນສໍາລັບກິດຈະກໍາການກໍ່ການຮ້າຍ ພາຍໃຕ້ຂອບການປະຊຸມປຶກສາຫາລື ອາຊຽນ-ຍີ່ປຸ່ນ ວ່າດ້ວຍ ການຕ້ານການກໍ່ການຮ້າຍ ທີ່ປະເທດ ຟີລິບປິນ, ❸ ກອງປະຊຸມໃນຫົວຂໍ້ "ການຈັດຕັ້ງປະຕິບັດການລົງໂທດທາງດ້ານການເງິນທີ່ມີເປົ້າໝາຍຕໍ່ການກໍ່ການຮ້າຍ ທີ່ເມືອງຢັງກຸ້ງ ປະເທດມຽນມາ;
- ສໍາເລັດການເຜີຍແຜ່ດໍາລັດ 460 ແລະ ຂໍ້ກໍານົດ 03 ໃຫ້ແກ່ສະຖາບັນການທະນາຄານ;
- ສໍາເລັດການຈັດກອງປະຊຸມກັບຊ່ຽວຊານໂຄງການ AFP ເພື່ອປຶກສາຫາລື ແລະ ສ້າງຄວາມເປັນເອກະພາບຕໍ່ກັບຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງໂຄງການ BOL-AFP ກ່ອນທີ່ຈະລາຍງານທ່ານ ຜູ້ວ່າການ ທຫລ.

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈໍານວນ 60 ລ້ານໃບ;
- ສືບຕໍ່ສ້າງລະບົບໂປຣແກຣມ Client Utility ເພື່ອຊ່ວຍບັນດາສະຖາບັນການເງິນຈຸລະພາກໃນການເກັບກໍາ ແລະ ລາຍງານຂໍ້ມູນສິນເຊື່ອຕາມ IFF;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ ຄົ້ນຄວ້າ ຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❹ ສືບຕໍ່ຄົ້ນຄວ້າຮ່າງກ່ຽວກັບລະບຽບວ່າດ້ວຍ ປະກັນໄພ ການເງິນຈຸນລະພາກ;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015).

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ພາສີ ພິມມະກອນ